ເຈົ້າໄດ້ອ່ານປຶ້ມຫົວນີ້ ກໍຄືກັນກັບວ່າເຈົ້າໄດ້ດຳເນີນບາດກ້າວທຳອິດເພື່ອເຮັດໃຫ້ບ້ານເຮືອນມີຄວາມປອດໄພ ສຳລັບຕົວເຈົ້າເອງ ແລະລູກ. ບາດກ້າວຕໍ່ໄປ ກໍຄືໃຫ້ໄປຂໍຄວາມຊ່ອຍເຫລືອຈາກອົງການຈັດຕັ້ງດັ່ງຕໍ່ລົງໄປນີ້:

ສະຖານທີ່ທີ່ໃຫ້ການຊ່ອຍເຫລືອ:
ໂທຣະສັບສາຍດ່ວນແຫ່ງຊາຕເພື່ອໃຫ້ຄວາມຊ່ອຍເຫລືອແກ່ຜູ້ຍິງທີ່ຖືກຜົວທາຣຸນ
**National Domestic Violence Hotline**
**1-800-799-7233**
*ຖ້າວ່າຫູເຈົ້າບໍ່ດີ ແຕ່ເຈົ້າເວົ້າພາສາອັງກິດໄດ້, ໃຫ້ເຈົ້າໂທຣ໌ຫາເລກທີ່ 1-800-787-3224*

ຄຳແນະນຳ: ພະນັກງານໂທຣະສັພທີ່ປາກພາສາອັງກິດໄດ້ຈະມາເວົ້າໂທຣະສັບ ນຳເຈົ້າ. ຈົ່ງບອກໃຫ້ເພິ່ນຮູ້ວ່າເຈົ້າເວົ້າພາສາໃດ ແລະມາຈາກປະເທດໃດ, ແລະລໍຖ້າຈົນເຖິງເວລາເພິ່ນໃຫ້ເຈົ້າເວົ້ານຳນາຍພາສາ.

ກະຣຸນາ ຈົດເອົາບ່ອນບໍຣິການຕ່າງໆທີ່ຢູ່ໃນເຂຕຄຸ້ມຂອງເຈົ້າໄວ້:

ປຶ້ມຫົວນີ້ໄດ້ຖືກພິມເປັນພາສາ:
ອາຣາບິກ, ອາມີນຽນ, ບອສນຽນ/ຄໂຣເອຊຽນ, ຂເມນ, ຈີນ, ດາຣີ/ຟາຣຊີ, ມົ້ງ, ເກີດິສ, ລາວ, ຣັຊຊຽນ, ໂຊມາລີ, ແລະວຽດນາມ. ສັ່ງເອົາໄດ້ທີ່ The California Refugee Health Program ໂທຣະສັພເລກທີ່ (916) 322-2087.

ປຶ້ມຫົວນີ້ໄດ້ຮັບການແກ້ໄຂດັດແປງແລະພິມເຜີຍແຜ່ໂດຍ the Department of Health Services, Refugee Health Section, ໂດຍການຊ່ອຍເຫລືອຈາກ the Domestic Violence Prevention Program, ແລະ ພະນັກງານທີ່ຮັບຜິດຊອບນຳສຸຂພາບຂອງອົພຍົບຈາກ Los Angeles, Merced, ແລະ Catholic Charities San Diego. ຕົ້ນສະບັບໄດ້ຖືກຂຽນຂຶ້ນໂດຍ AYUDA, Inc., ແລະ the Family Violence Prevention Fund.

(Laotian)

# ບໍ່ມີໃຜມີສິດ ເຮັດໃຫ້ເຈົ້າເຈັບປວດ ເຖິງແມ່ນວ່າຜູ້ນັ້ນ ຈະແມ່ນຜູ້ທີ່ເຈົ້າຮັກ

# ຕອບຂໍ້ຂ້ອງໃຈ ຂອງຜູ້ຍິງ ອົພຍົບ

ຖ້າຫາກວ່າຜົວຂອງເຈົ້າ, ຜົວເກົ່າຂອງເຈົ້າ, ຫລືຄູ່ຮັກ (ທີ່ຢູ່ຮ່ວມເຮືອນກັບເຈົ້າ) ເຮັດໃຫ້ເຈົ້າໄດ້ຮັບຄວາມເຈັບປວດທາງຮ່າງກາຍ ຫລືທາງຈິຕໃຈ ເກີດຕໍ່ກັນຫລາຍມື້ ຫລືຫລາຍອາທິດແລ້ວ, ການກະທຳແນວນັ້ນ ແມ່ນ ການກະທຳຄວາມຮຸນແຮງຕໍ່ເມັຍ. ຢູ່ສະຫະຣັຖອາເມຣິກາ, ການກະທຳຄວາມຮຸນແຮງຕໍ່ເມັຍນັ້ນ ເປັນຄວາມຜິດສະຖານອາຍາ **"crime"**. ເພິ່ນຈະຖືວ່າແມ່ນການກະທຳຮຸນແຮງຕໍ່ເມັຍ ຖ້າຫາກວ່າລາວ:

- ທຳການຂົ່ມຂູ່ ຫລືເຮັດໃຫ້ເຈົ້າບາດເຈັບ
- ບັງຄັບໃຫ້ຮ່ວມເພດນຳ ເມື່ອເວລາເຈົ້າບໍ່ມີຄວາມຕ້ອງການ
- ກີດກັນບໍ່ໃຫ້ເຈົ້າໄປຫາທ່ານໝໍ
- ທຳລາຍໂຕະຕັ່ງ, ຂ້າສັຕລ້ຽງ, ທັບມ້າງສິ່ງຂອງທີ່ເຈົ້າມັກ, ແລະອື່ນໆ
- ຄວບຄຸມເງິນຂອງເຈົ້າ, ກີດກັນບໍ່ໃຫ້ເຈົ້າພົບພໍ້ໝູ່ເພື່ອນແລະຍາຕ ພີ່ນ້ອງ
- ບໍ່ອານຸຍາດໃຫ້ເຈົ້າອອກໄປຈາກບ້ານເຮືອນ

<u>ຫາກຕົກຢູ່ໃນອັນຕະລາຍ, ຂ້ອຍຈະເຮັດແນວໃດ?</u>

- ຖ້າຢາກໄດ້ຮັບການຊ່ວຍເຫລືອໄວ ໃຫ້ໂທຣ໌ນ້ຳເບີ 911 ແລະແຈ້ງໃຫ້ພະນັກງານໂທຣະສັບຮູ້ວ່າ ເຈົ້າເວົ້າພາສາໃດ.
- ໄປຢູ່ ເຮືອນພັກເຊົາສຳລັບຜູ້ຍິງ **"shelter"**. "ເຮືອນພັກເຊົາສຳລັບຜູ້ຍິງ" ແມ່ນສະຖານທີ່ປອດໄພ ຊຶ່ງປຽບເໝືອນເຮືອນຫລັງໃຫ່ຍ ທີ່ເຈົ້າແລະລູກຂອງເຈົ້າຈະພັກເຊົາ ຫລັບນອນ ແລະຢູ່ກິນໄດ້. ຕາມປົກກະຕິແລ້ວ ເຮືອນພັກທີ່ກ່າວນີ້ ໃຫ້ບໍຣິການຟຣີ ແລະສ່ວນຫລາຍກໍມີລາຍລະອຽດກ່ຽວກັບບໍຣິການອື່ນໆ ທີ່ຢູ່ໃນເຂຕຊຸມຊົນບ່ອນເຈົ້າຢູ່.
- ໄປພັກຢູ່ນຳໝູ່ເພື່ອນ ຫລືຍາຕພີ່ນ້ອງ <u>ແຕ່ຢ່າບອກ</u>ບ່ອນທີ່ເຈົ້າຢູ່ໃຫ້ໃຜຮູ້.
- ໂທຣະສັບຫາອົງການ ທີ່ໃຫ້ການຊ່ວຍເຫລືອເອົາເຈົ້າມາອາເມຣິກາ. ສອບຖາມເພິ່ນເບິ່ງວ່າ ເຮັດແນວໃດຈຶ່ງຈະໄດ້ຮັບການຊ່ວຍເຫລືອທາງດ້ານກົດໝາຍ.

ຖ້າເຈົ້າໜີອອກຈາກເຮືອນ, ຈົ່ງພຍາຍາມເອົາລູກຂອງເຈົ້າໄປນຳ. ຖ້າເຈົ້າສາມາດເຮັດໄດ້, ຈົ່ງເອົາສິ່ງຂອງຕໍ່ໄປນີ້ໄປນຳ:

- ໃບຂັບຂີ່ ຫລື ບັຕປະຈຳຕົວ
- ບັຕ I-94 ຫລື ບັຕຂຽວ
- ບັນທຶກ ການຝາກເງິນຢູ່ທະນາຄານ, ປຶ້ມເຊັກ, ປຶ້ມບັນຊີທະນາຄານ
- ໜັງສືຢັ້ງຢືນການເກີດ, ເອກສານກ່ຽວກັບການແຕ່ງດອງ
- ເອກສານກ່ຽວກັບ ແວລແຟຣ໌, ເມດີ-ແຄລ໌, ຟູດສແຕມສ໌
- ເອກສານທຸກຢ່າງ ທີ່ກ່ຽວຂ້ອງກັບການເຂົ້າມາປະເທດອາເມຣິກາ
- ບັຕປະຊາສົງເຄາະ
- ຢາປິ່ນປົວພະຍາທ

ພ້ອມດຽວກັນນີ້, ໃຫ້ຊຸກເຊື່ອງເງິນຂອງເຈົ້າໄວ້ບ່ອນລັບ ແລະຊຸກເຊື່ອງລູກກຸນແຈພິເສດນຶ່ງຊຸດ ແລະເຄື່ອງນຸ່ງເພື່ອໄວ້ຖ່າຍ ໄວ້ໃນບ່ອນດຽວກັນ.

ຖ້າເຈົ້າຫາກບໍ່ສາມາດ ເອົາເອກສານຕົ້ນສບັບ ຫລື ສຳເນົາຂອງເອກສານນັ້ນໄປນຳໄດ້, ໃຫ້ເຈົ້າຈົດເອົາລາຍລະອຽດຂອງເອກສານເຫລົ່ານັ້ນ ໃສ່ເຈັ້ຍໃບນຶ່ງ. ຈົ່ງເກັບ ສິ່ງເຫລົ່ານີ້ໄວ້ໃນຖົງອັນນຶ່ງ ເພື່ອວ່າເວລາເຈົ້າໜີໄປ ເຈົ້າຈະຊອກຫາມັນໄດ້ງ່າຍ. ເຈົ້າຈະເກັບສຳເນົາເອກສານເຫລົ່ານີ້ໄວ້ຢູ່ເຮືອນຂອງໝູ່ເພື່ອນເຈົ້າກໍໄດ້.

<u>ຂ້ອຍຄວນຈະຮ້ອງຫາຕຳຣວຈບໍ່?</u>

ແມ່ນແລ້ວ. ການກະທຳຄວາມຮຸນແຮງຕໍ່ເມັຍ ແມ່ນ "ຄວາມຜິດສະຖານອາຍາ". ຕຳຣວຈສາມາດ ພາເຈົ້າແລະລູກຂອງເຈົ້າໄປສົ່ງຍັງເຮືອນຍາຕພີ່ນ້ອງ ຫລືເຮືອນໝູ່ເພື່ອນຂອງເຈົ້າ, ຫລືໄປສົ່ງທີ່ປອດໄພ ເຊັ່ນ "ເຮືອນພັກສຳລັບຜູ້ຍິງ" **shelters**. ຖ້າຫາກຕຳຣວຈສົງໃສວ່າໄດ້ມີການກະທຳຮຸນແຮງເກີດຂຶ້ນ, ເພິ່ນອາຈຈະທຳການຈັບກຸມຜົວ ຫລືຄູ່ຮັກຂອງເຈົ້າ ກໍໄດ້. ຖ້າຫາກເຈົ້າໜ້າທີ່ຕຳຣວຈບໍ່ສາມາດເວົ້າພາສາຂອງເຈົ້າໄດ້, ໃຫ້ເຈົ້າຊອກຫາຜູ້ໃດຜູ້ນຶ່ງ ຊຶ່ງບໍ່ແມ່ນລູກ, ຫລືຜົວ, ຫລືຄູ່ຮັກຂອງເຈົ້າ ມາແປພາສາໃຫ້.

ຈົ່ງຮ້ອງຂໍໃຫ້ເຈົ້າໜ້າທີ່ຕຳຣວຈ ເຮັດລາຍງານ **"incident report"** ທຸກຄັ້ງ. ລາຍງານ ນີ້ຈະບັລຍາຍເຖິງເຫຕການທີ່ເກີດຂຶ້ນ (ເຫຕຜົນທີ່ພາໃຫ້ເຈົ້າຮ້ອງຫາຕຳຣວຈ). ຈົ່ງຂໍເອົາ "ເລກທີ່ຂອງລາຍງານ" ເພື່ອຄວາມສະດວກໃນການຂໍເອົາສຳເນົາຂອງລາຍງານນັ້ນ. ພ້ອມດຽວກັນນີ້ ໃຫ້ເຈົ້າຂໍເອົາຊື່ ແລະນ້ຳເບີກາເຄື່ອງ ໝາຍ (ເລກປະຈຳຕົວ) ຂອງເຈົ້າໜ້າທີ່ຕຳຣວຈທີ່ເຮັດລາຍງານ.

ຖ້າຜົວ ຫລືຄູ່ຮັກຂອງເຈົ້າຫາກຖືກຄວບຄຸມຕົວໄປຍັງສະຖານີຕຳຣວຈ, ລາວອາດຈະຖືກປ່ອຍຕົວກັບຄືນມາເຮືອນພາຍໃນສອງຊົ່ວໂມງ. ຈົ່ງສວຍໂອກາດເອົາເວລານີ້ ຊອກຫາບ່ອນຢູ່ທີ່ປອດໄພ.

### ຕໍ່ໄປ ຂ້ອຍຈະປ້ອງກັນຕົວຂອງຂອັຍໄດ້ແນວໃດແດ່?

ຈົ່ງພິຈາຣະນາຮ້ອງຂໍເອົາ ຄຳສັ່ງປ້ອງກັນ **"protection order"** ຈາກສານຍຸຕິທັມ. ຄຳສັ່ງປ້ອງກັນນີ້, ບາງເທື່ອເພິ່ນກໍ ເອີ້ນຊື່ວ່າ **"restraining Order"** ຫລື **"injunction"**. ຄຳສັ່ງ ທີ່ກ່າວນີ້ ສາມາດສະກັດກັ້ນບໍ່ໃຫ້ຜູ້ທີ່ທາຣຸນເຈົ້າ ມາຢູ່ໃກ້ຊິດເຈົ້າ, ລູກຂອງເຈົ້າ, ຫລືຍາຕພີ່ນ້ອງຄົນອື່ນໆຂອງເຈົ້າ. ເຈົ້າສາມາດ ຂໍໃຫ້ເພິ່ນເອົາຜົວ ຫລືຄູ່ຮັກຂອງເຈົ້າອອກໄປຈາກເຮືອນ ແລະບໍ່ ໃຫ້ລາວມາກ່ຽວຂ້ອງ ນຳເຣື່ອງການເຂົ້າມາຕັ້ງຖິ່ນຖານໃໝ່ ຂອງເຈົ້າ. ເພື່ອໃຫ້ ຄຳສັ່ງປ້ອງກັນມີຄວາມສັກສິດ, ເຈົ້າຈະຕ້ອງ ໄດ້ຮ້ອງຂໍໃຫ້ຕຳຣວຈມາທຳການປະຕິບັຕຄຳສັ່ງນັ້ນ.

### ຂ້ອຍຈະມີສິທໄດ້ຮັບ Protection Order ບໍ່ ຖ້າຫາກວ່າຂ້ອຍບໍ່ ແມ່ນຄົນສັນຊາຕອາເມຣິກັນ?

ແມ່ນແລ້ວ. ບໍ່ຈຳເປັນ ທີ່ເຈົ້າຈະຕ້ອງໄດ້ສັນຊາຕອາເມຣິກັນ ຫລື ເປັນຄົນຕ່າງດ້າວ ທີ່ຖືກຕ້ອງຕາມກົດຫມາຍ ຈຶ່ງຈະມີສິທຮ້ອງຂໍ ຄຳສັ່ງປ້ອງກັນ. ທະນາຍຄວາມ ອາຈຈະຊ່ອຍເຈົ້າໄດ້, ແຕ່ກໍບໍ່ ຈຳເປັນ. ເຈົ້າຈະເອົາແບບຟອມຄຳຮ້ອງໄດ້ທີ່ ຫ້ອງການສານ ຍຸຕິທັມ, ເຮືອນພັກເຊົາສຳລັບຜູ້ຍິງ women's shelters, ຫ້ອງ ການບໍຣິການທາງດ້ານກົດຫມາຍ, ແລະກົມຕຳຣວຈບາງແຫ່ງ. ຖ້າຢາກໄດ້ລາຍລະອຽດ ກ່ຽວກັບນະໂຍບາຍ ຄຳສັ່ງປ້ອງກັນ ຂອງສານຍຸຕິທັມໃນເຂດທີ່ເຈົ້າຢູ່, ໃຫ້ຕິດຕໍ່ຫາ: (1) "ທະນາຍ ຄວາມຂອງອົງການບໍຣິການທາງດ້ານກົດຫມາຍ" (ເພິ່ນແມ່ນທະ ນາຍທີ່ໃຫ້ບໍຣິການຟຣີ ແກ່ບຸຄຄົນທີ່ມີລາຍໄດ້ນ້ອຍ), ຫລື (2) ອົງ ການທີ່ໄດ້ໃຫ້ການຊ່ອຍເຫລືອເອົາເຈົ້າມາອາເມຣິກາ, ຫລື (3) ອົງ ການທີ່ໃຫ້ການຊ່ອຍເຫລືອແກ່ຊາວອົພຍົບໃນເຂດຂອງເຈົ້າ.

### ຖ້າຜົວຂອງຂ້ອຍຫາກບໍ່ຊ່ອຍຂ້ອຍແລ້ວ, ຂ້ອຍຈະຂໍຢູ່ອາເມຣິກາ ຢ່າງຖືກຕ້ອງຕາມກົດຫມາຍ ໄດ້ແນວໃດ?

ກົດຫມາຍກ່ຽວກັບຄວາມຣຸນແຮງຕໍ່ຜູ້ຍິງ (VAWA) ໄດ້ຣະບຸວິ ທີທາງຫລາຍຢ່າງ ເພື່ອຊ່ອຍເຫລືອຜູ້ຍິງທີ່ບໍ່ມີຫນັງສືອະນຸຍາດ ໃຫ້ເຂົ້າເມືອງ ຊຶ່ງແຕ່ງດອງກັບຄົນທີ່ມີສັນຊາຕອາເມຣິກັນ ຫລື ຄົນທີ່ຕັ້ງຖິ່ນຖານໃໝ່ຢ່າງຖາວອນ ໃຫ້ສາມາດຢູ່ອາເມຣິກາໄດ້ ຢ່າງຖືກຕ້ອງ. ເຈົ້າສາມາດຍື່ນຄຳຮ້ອງຂໍຢູ່ອາເມຣິກາ ເພື່ອເຈົ້າ ແລະເພື່ອລູກຂອງເຈົ້າທີ່ຕ້ອງການກ່ຽວກັບຄົນເຂົ້າເມືອງແລະສັນ ຊາຕໄດ້ໂດຍຕົນເອງໂດຍບໍ່ຕ້ອງເອື່ອຍອີງຜົວຂອງເຈົ້າ. ວິທີນີ້ເພິ່ນ ເອີ້ນວ່າ ຮ້ອງຂໍໂດຍຕົນເອງ **"self-petitioning"**. ເຈົ້າຕ້ອງມີ ລາຍງານຂອງຕຳຣວຈ ທີ່ຢັ້ງຢືນວ່າຖືກຜົວທາຣຸນເປັນຫລັກ ຖານ. ຜົວຂອງເຈົ້າບໍ່ມີຫນ້າທີ່ກ່ຽວຂ້ອງຫຍັງກັບເຣື່ອງນີ້. ລາວບໍ່ ມີຫນ້າທີ່ຮູ້ກ່ຽວກັບ ການຍື່ນຄຳຮ້ອງຂໍຢູ່ອາເມຣິກາ ຂອງເຈົ້າແຕ່ ຢ່າງ ໃດ. ກົດຫມາຍເປັນສິ່ງທີ່ສັບສົນ ເຂົ້າໃຈຍາກ.

ກ່ອນທີ່ເຈົ້າຈະໄປຫາຫ້ອງການຕຣວດຄົນເຂົ້າເມືອງ (INS), ຈົ່ງ ປຶກສານຳເຈົ້າຫນ້າທີ່ shelter, ນັກກົດຫມາຍກ່ຽວກັບຣະບຽບ ຄົນເຂົ້າເມືອງ, ຫລືອົງການຈັດຕັ້ງອັນໃດອັນນຶ່ງທີ່ມີລາຍ ຊື່ຢູ່ດ້ານ ຫລັງຂອງປຶ້ມນີ້. ກ່ອນທີ່ເຈົ້າຈະເຮັດຄຳຮ້ອງຂໍໂດຍຕົນເອງໄດ້ ເຈົ້າຈະຕ້ອງເປັນຄົນທີ່ມີຜົວຢູ່. ຖ້າເຈົ້າໄດ້ຮັບຫນັງສືຢ່າຮ້າງຈາກ ຜົວຂອງເຈົ້າເວລາໃດ ຈົ່ງແຈ້ງໃຫ້ທະນາຍຄວາມຊາບໂລດ.

ຖ້າຫາກວ່າເຈົ້າຖືກເຈົ້າຫນ້າທີ່ INS ຈັບຕົວ ແລະກຳລັງຕົກຢູ່ໃນ ລະຫວ່າງຖືກພິຈາຣະນາໃຫ້ອອກຈາກປະເທດ "removal proceedings" (ແຕ່ກ່ອນເພິ່ນເອີ້ນວ່າຖືກເນຣະເທສ), ເຈົ້າຍັງມີ ໂອກາສຂໍໃຫ້ເພິ່ນປ່ອຍຕົວ. ເຈົ້າຕ້ອງມີສຳເນົາລາຍງານຂອງຕຳ ຣວຈທີ່ຢັ້ງຢືນວ່າເຈົ້າໄດ້ຖືກຜົວທາຣຸນ.

### ຜົວຂອງຂ້ອຍຂູ່ວ່າຈະເອົາລູກຫນີ ຖ້າວ່າຂ້ອັຍຫນີຈາກລາວ. ຂ້ອຍຈະເຮັດແນວໃດ?

ຖ້າວ່າຜົວຂອງເຈົ້າ ຫລືຄູ່ຮັກຂອງເຈົ້າຂູ່ວ່າຈະເອົາລູກຫນີ ຫລືສົ່ງ ລູກໄປຍັງບ້ານເກີດເມືອງນອນຂອງລາວ, ເຈົ້າຈະຕ້ອງຫາຄົນ ຊ່ອຍ ເຫລືອ ໂດຍປະຕິບັຕດັ່ງຕໍ່ໄປນີ້:

1. ຈົ່ງພະຍາຍາມຂໍເອົາຄຳສັ່ງໃຫ້ສິທໃນການລ້ຽງລູກ **"custody order"** ຈາກສານ (ນີ້ແມ່ນເອກສານທາງດ້ານກົດຫມາຍທີ່ມອບສິທໃຫ້ເຈົ້າເປັນຜູ້ດູ ແລລູກຂອງເຈົ້າ). ຄຳສັ່ງອັນນີ້ຈະກີດຫ້າມບໍ່ໃຫ້ຜົວ ຫລືຄູ່ຮັກຂອງເຈົ້າສົ່ງ ລູກອອກໄປຈາກອາເມຣິກາ.
2. ຈົ່ງສົ່ງສຳເນົາຄຳສັ່ງໃຫ້ສິທໃນການລ້ຽງລູກນີ້ ໄປຍັງກະຊວງການຕ່າງປະ ເທສ ເພື່ອບໍ່ໃຫ້ເພິ່ນເຮັດວີຊາ ຫລືອອກປັສປອຕໃຫ້ລູກຂອງເຈົ້າ. ນອກ ຈາກນີ້ ໃຫ້ເຈົ້າສົ່ງສຳເນົາອີກເນື່ອງສບັບໄປຍັງສະຖານທູຕ ປະເທສຂອງຜົວ ຫລືຄູ່ຮັກຂອງເຈົ້າ ທີ່ຕັ້ງຢູ່ສະຫະຣັຖອາເມຣິກາ.
3. ຈົ່ງສົ່ງສຳເນົາຄຳສັ່ງນີ້ໄປໃຫ້ໂຮງຮຽນ ບ່ອນທີ່ລູກຂອງເຈົ້າທຸກຄົນຮຽນຢູ່. ຈົ່ງຮ້ອງຂໍນຳເຈົ້າຫນ້າທີ່ຂອງໂຮງຮຽນ ບໍ່ໃຫ້ເພິ່ນປ່ອຍລູກຂອງເຈົ້າໃຫ້ຜູ້ ອື່ນ ນອກຈາກຕົວຂອງເຈົ້າຜູ້ດຽວ.

### ຖ້າຂ້ອຍຫນີຈາກຜົວຂ້ອຍຈະເອົາເງິນມາແຕ່ໃສ ມາລ້ຽງເກືອ ຕົວ ຂ້ອຍເອງ ແລະລູກຂອງຂ້ອຍ?

ກົດຫມາຍບັງຄັບໃຫ້ຜູ້ທີ່ເປັນພໍ່ຂອງລູກເຈົ້າ ສົ່ງເງິນຊ່ອຍລ້ຽງດູ ເຂົາ ໂດຍບໍ່ມີສ່ວນກ່ຽວຂ້ອງຫຍັງກັບສະພາບການເຂົ້າມາອາເມ ຣິກາຂອງເຈົ້າ. ເຖິງແມ່ນວ່າ ເຈົ້າຈະ ບໍ່ໄດ້ຢູ່ນຳກັນກັບຜົວເຈົ້າ ຫລືບໍ່ເຄີຍໄດ້ແຕ່ງງານກັບລາວຢ່າງຖືກຕ້ອງກໍຕາມ ກົດຫມາຍ ສະບັບນີ້ກໍຍັງຈະໃຊ້ປະຕິບັຕໄດ້.

ຖ້າຢາກຮູ້ວິທີຂໍເອົາເງິນຄ່າລ້ຽງລູກຢູ່ໃນຣັຖກາລີຟໍເນັຍ,ເຈົ້າຕ້ອງ ຕິດຕໍ່ຫາທະນາຍຄວາມທີ່ຊ່ຽວຊານທາງດ້ານກົດຫມາຍ ກ່ຽວກັບ ຄົນເຂົ້າເມືອງ ຫລືຕິດຕໍ່ຫາອົງການທີ່ໄດ້ໃຫ້ການຊ່ອຍເຫລືອເຈົ້າ ເຂົ້າມາອາເມຣິກາ. ຜູ້ຍິງທີ່ແຕ່ງງານແລ້ວບາງຄົນຍັງສາມາດ ຮຽກຮ້ອງເອົາເງິນຊ່ອຍເຫລືອເພີ່ມຕື່ມຈາກຜົວເກົ່າໄດ້ອີກ. ຜູ້ຍິງ ອົພຍົບຈະໃຊ້ບັຕ I-94 ເປັນຫລັກຖານວ່າມີສິທເຮັດວຽກງານ ກໍໄດ້.

### ຂ້ອຍເປັນອົພຍົບ. ຂ້ອຍຈະມີສິທໄດ້ຮັບເງິນ ແວລແຟຣ໌ ແລະ ເມດີ-ແຄລ໌ ບໍ່?

ໃນໄລຍະ 5 ປີທຳອິດທີ່ເຈົ້າມາເຖິງອາເມຣິກາ, ເຈົ້າມີສິທທີ່ຈະ ໄດ້ຮັບ ຟູດສແຕມສ໌, ການຊ່ອຍເຫລືອສຸກເສີນສຳລັບຄອບຄົວທີ່ມີ ຄວາມຈຳເປັນ, ເມດີ- ແຄລ໌ ແລະໂຄງການທີ່ໃຫ້ການຊ່ອຍເຫລືອ ອື່ນໆ, ເຫມືອນກັນກັບຄົນທີ່ໄດ້ສັນຊາຕອາເມຣິກັນ. ອົພຍົບສ່ວນ ຫລາຍ ທີ່ເຂົ້າມາອາເມຣິກາຮອດ 5 ປີ ຫລືກາຍກວ່າ 5 ປີ ຈະບໍ່ມີ ສິທໄດ້ຮັບ ຟູດສແຕມສ໌ ອີກ. ເງື່ອນໄຂໃນການໄດ້ຮັບເມດີ-ແຄລ໌, ການຊອ່ຍເຫລືອສຸກເສີນສຳລັບຄອບຄົວທີ່ມີຄວາມຈຳເປັນ, ແລະ ການຊອ່ຍເຫລືອທົ່ວໄປສຳລັບຜູ້ທີ່ມາຢູ່ອາເມຣິກາ ໄດ້ 5 ປີຫລື ກາຍກວ່າ 5 ປີ ນັ້ນ ແຕກຕ່າງກັນແຕ່ລະຣັຖ. ຈົ່ງສອບຖາມລາຍ ລະອຽດນຳທະນາຍຄວາມ ກ່ຽວກັບກົດຫມາຍຕຣວດຄົນເຂົ້າ ເມືອງ ຫລືອົງການທີ່ໃຫ້ການຊ່ອຍເຫລືອເຈົ້າ.

### ລູກຂອງຂ້ອຍທີ່ໄດ້ສັນຊາຕອາເມຣິກາແລ້ວ ຈະມີສິທໄດ້ຮັບການ ຊ່ອຍເຫລືອຈາກປະຊາສົງເຄາະ ແລະ ເມດີ-ແຄລ໌ ບໍ່?

ແມ່ນແລ້ວ. ລູກຂອງເຈົ້າທີ່ໄດ້ສັນຊາຕອາເມຣິກັນແລ້ວ ມີສິທໄດ້ ຮັບການຊ່ອຍເຫລືອຈາກປະຊາສົງເຄາະ ເຫມືອນກັນກັບລູກຂອງ ຄົນທີ່ໄດ້ສັນຊາຕອາເມຣິກັນແລ້ວທຸກຄົນ.

### ຖ້າຂ້ອຍຫາກເຮັດແນວໃດແນວນຶ່ງດັ່ງຕໍ່ລົງໄປນີ້ ຂ້ອຍຈະຖືກເພິ່ນ ເນຣະເທສຫລືບໍ່?

ຖ້າວ່າ ເຈົ້າເຂົ້າມາອາເມຣິກາ ໂດຍມີຫນັງສືອະນຸຍາຕ ຢ່າງຖືກ ຕ້ອງຕາມກົດຫມາຍ ເຈົ້າຈະບໍ່ຖືກເພິ່ນເນຣະເທສຍ້ອນວ່າເຈົ້າຍື່ນ ຟ້ອງວ່າຖືກຜົວທຳຄວາມຣຸນແຮງ. ເຈົ້າອາຈຖືກເນຣະເທສໄດ້ຖ້າ ວ່າເຈົ້າໃຊ້ເອກສານປອມແປງ, ກະທຳຄວາມຜິດໃນສະຖານອາ ຍາ, ຫລືວ່າບໍ່ປະຕິບັຕຕາມເງື່ອນໄຂທີ່ບົ່ງໄວ້ໃນຫນັງສືວີຊາອະນຸ ຍາຕເຂົ້າເມືອງ.

### ຖ້າຫາກຂ້ອຍເອົາເຣື່ອງຜົວຫລືຄູ່ຮັກຂອງຂ້ອຍ, ລາວຈະຖືກເນ ຣະເທສບໍ່?

ຖ້າເຈົ້າຫາກພຽງແຕ່ໄປຂໍຄວາມຊ່ອຍເຫລືອ ຈາກສະຖານທີ່ພັກ ເຊົາສຳລັບຜູ້ຍິງ shelter ຫລືຈາກທະນາຍຄວາມ, ຜົວຫລືຄູ່ຮັກ ຂອງເຈົ້າອາດຈະບໍ່ຖືກເພິ່ນເນຣະເທສ.

ຖ້າຫາກເຈົ້າເອີ້ນຕຳຣວຈມາ, ຜົວຫລືຄູ່ຮັກຂອງເຈົ້າຖືກຈັບ ແລະ ຖືກສານຕັດສິນວ່າມີຄວາມຜິດໃນສະຖານອາຍາ, ລາວອາຈຖືກ ເນຣະເທສໄດ້, ອັນນີ້ກໍຂຶ້ນນຳວ່າ ລາວເຂົ້າມາອາເມຣິກາຢ່າງຖືກ ຕ້ອງຕາມກົດຫມາຍຫລືບໍ່ ແລະຄວາມຫນັກເບົາໃນການກະທຳ ຜິດຂອງລາວ.

**ຈົ່ງຮັກສາຄວາມປອດໄພໃຫ້ຕົນເອງ ແລະລູກ.**
**ຈົ່ງຈຳໄວ້ວ່າການກະທຳຄວາມຣຸນແຮງ**
**ຕໍ່ເມັຍແມ່ນຄວາມຜິດສະຖານອາຍາ.**
**ການຮອ້ງຂໍຄວາມຊອ່ຍເຫລືອຈາກຜູ້ອື່ນໃນກໍຣະນີນີ້**
**ແມ່ນຄວາມຈຳເປັນສຳລັບເຈົ້າ.**